ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 2 ສະບັບທີ 3 (ເດືອນ ມິຖຸນາ , ປີ 2026) ໜ້າ 151 – 162
Lao Journal of Sustainable Teacher Education SALAVAN Teacher Training College, Volume 2 No. 3 (June, 2026) Page 151 – 162
ISSN (Print): 0056-3080
ISSN (Online): 3107-2992

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ຜົນຂອງການ coaching ຕໍ່ຄວາມຮູ້ ແລະ ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດ

# The Impact of Coaching on the Action Research Knowledge and Competence of Pre-Service Teachers in the 12+2 Primary Teacher Education Program at Savannakhet Teacher Training College

ເພັງທະນົງສັກ ພັກດີວິຈິດ[1]
Phengthanongsak PHAKDEEVICHIT[1]

## ບົດຄັດຫຍໍ້

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອ 1) ສຶກສາຄວາມຮູ້ ແລະ ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດ ແລະ 2) ສຶກສາຜົນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບພາກວິຊາສ້າງຄູປະຖົມສຶກສາ ວິທະຍາໄລຄູສະຫວັນນະເຂດຫຼັງການ coaching ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈເປັນນັກສຶກສາ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດທີ່ລົງຝຶກຫັດວິຊາຊີບ ໃນພາກຮຽນທີ 2 ສົກຮຽນ 2025-2026 ຈຳນວນ 3 ຄົນ ເຄື່ອງມືທີ່ໃຊ້ໃນການວິໄຈແບ່ງອອກເປັນ 2 ປະເພດ ຄື: 1) ເຄື່ອງມືທີ່ໃຊ້ໃນການທົດລອງ ຄື: ແຜນການ coaching ການວິໄຈໃນຊັ້ນຮຽນທີ່ຜູ້ວິໄຈສ້າງຂຶ້ນຈາກການສຶກສາເອກະສານ ແລະ ວິໄຈທີ່ກ່ຽວຂ້ອງໂດຍໃຊ້ແນວຄິດການ coaching ຂອງແຮັສ (Haas) ຈຳນວນ 9 ແຜນ 2) ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນໃນການວິໄຈ ຄື: ແບບທົດສອບວັດຄວາມຮູ້ກ່ຽວກັບການວິໄຈໃນຊັ້ນຮຽນ ແບບປະເມີນຄວາມສາມາດໃນການວິໄຈໃນຊັ້ນຮຽນ ແລະ ແບບປະເມີນຄຸນນະພາບລາຍງານການວິໄຈ ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນຄື: ຄ່າສະເລ່ຍ ແລະ ຄ່າຜິດດ່ຽງມາດຕະຖານ ສຳລັບຂໍ້ມູນທາງຄຸນນະພາບໃຊ້ການວິເຄາະເນື້ອໃນ.

**ຜົນການວິໄຈ ພົບວ່າ:** 1). ຄວາມຮູ້ໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ຫຼັງການ coaching ສູງ ກວ່າກ່ອນການ coaching ຢ່າງມີລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ .05 ຄວາມສາມາດ

[1]ພະແນກຈັດຕັ້ງພະນັກງານ ກວດກາ ແລະ ປະກັນຄຸນນະພາບ ວິທະຍາໄລຄູສະຫວັນນະເຂດ/ສປປ ລາວ.
Corresponding Author: Phengthanongsak PHAKDEEVICHIT, Email: Phengthanongsak88@gmail.com,
Tel: +8562095453639

ໃນການວິໄຈໃນຊັ້ນຮຽນໂດຍພາບລວມຢູ່ໃນລະດັບສູງ ຜົນການວິເຄາະເນື້ອໃນສະຫຼູບໄດ້ວ່າສູນຝຶກຫັດວິຊາຊີບຄວນຈັດຝຶກອົບຮົມການວິໄຈໃນຊັ້ນຮຽນເພີ່ມເຕີມເພື່ອກຽມຄວາມພ້ອມ ການວິໄຈໃນຊັ້ນຮຽນບໍ່ຄົບທຸກຂັ້ນຕອນເພາະຊ່ວງເວລາສັ້ນ ເຮັດໃຫ້ນັກສຶກສາ ຂາດການທົບທວນນະວັດຕະກໍາທີ່ກ່ຽວຂ້ອງ ແລະ ຂາດການອ້າງອີງການ coaching ເປັນວິທີການທີ່ຊ່ວຍໃຫ້ນັກສຶກສາໄດ້ພັດທະນາທັກສະ ຂະບວນການຄິດ ຄວາມຮູ້ ແລະ ການການປະຕິບັດໃຫ້ປະສົບຜົນສໍາເລັດ coaching ທີ່ດີຈະສ້າງຄວາມໜ້າເຊື່ອຖື ແລະ ໄວ້ວາງໃຈ ແລະ 2). ຜົນການກວດຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ຫຼັງການ coaching ໂດຍພາບລວມຄຸນນະພາບຢູ່ໃນລະດັບປານກາງ ເນື່ອງມາຈາກຫຼັກສູດເນັ້ນໃສ່ການຮຽນໃນຫ້ອງຮຽນ ແຕ່ຂາດຂັ້ນຕອນການລົງມືເຮັດ ຈຶ່ງເກີດຄວາມເຂົ້າໃຈໃນການນໍາເອົາທິດສະດີມາປະຍຸກໃຊ້ໃນສະຖານະການຈິງໃນຊັ້ນຮຽນ ເຮັດໃຫ້ນັກສຶກສາຍັງຂາດອີງຄວາມຮູ້ພື້ນຖານ ແລະ ປະສົບການທາງກົງໃນການດໍາເນີນການວິໄຈພາກປະຕິບັດ.
**ຄໍາສັບທີ່ສໍາຄັນ**: ການ coaching, ການວິໄຈໃນຊັ້ນຮຽນ, ນັກສຶກສາຝຶກຫັດວິຊາຊີບ.

## Abstract

This study aimed to: (1) investigate the knowledge and competencies in classroom action research among pre-service teachers in the 12+2 Primary Teacher Education Program at Savannakhet Teacher Training College; and (2) evaluate the effectiveness of a coaching intervention on their research outcomes. The sample comprised three pre-service teachers undertaking their practicum during the second semester of the 2025-2026 academic year. The research instruments included nine classroom action research coaching plans—developed based on Haas's coaching framework—as well as a knowledge test, a competency assessment rubric, and a research report evaluation form. Quantitative data were analyzed using mean and standard deviation, while qualitative data were examined through content analysis.

The findings revealed that: (1) pre-service teachers' knowledge of classroom action research significantly improved following the coaching intervention ($p < .05$), with overall research competencies reaching a high level. (2) The overall quality of the action research reports was assessed as moderate. The study concludes that while coaching effectively enhances cognitive processes and practical skills, the professional practicum center should implement supplementary training to address procedural gaps—such as literature review and academic citation—resulting from time constraints. It is recommended that future interventions provide more intensive practical training to improve research quality.

**Keywords:** Coaching, Classroom Action Research, Pre-service Teachers.

## ບົດນໍາ

ການສຶກສາ ແມ່ນການນໍາເອົາຄວາມຮູ້ໄປນໍາໃຊ້ໃຫ້ເກີດປະໂຫຍດຕໍ່ ສັງຄົມ ໂດຍຖືເອົາການສຶກສາເປັນວຽກງານໃນການພັດທະນາຊັບພະຍາກອນມະນຸດ, ຖືເອົາຄວາມສໍາຄັນຂອງການພັດທະນາຄົນທາງດ້ານສິນທໍາປະຕິວັດ, ຊີວະທັດ, ໂລກະທັດ, ວິທະຍາສາດ ແລະ ຄວາມກ້າວໜ້າ ຄື: ການສ້າງຄົນໃຫ້ມີຄວາມຮູ້ຄວາມສາມາດ, ຮູ້ຄິດ, ມີອາຊີບ,ສ້າງສັງຄົມໃຫ້ມີການຮຽນຮູ້, ເສດຖະກິດແຫ່ງພູມປັນຍາເທື່ອລະກ້າວ.(ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ, 2015). ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນ

ພົນລະເມືອງດີຂອງຊາດມີຄຸນສົມບັດມີສຸຂະພາບເຂັ້ມແຂງມີຄວາມຮູ້, ຄວາມສາມາດສູງ. ມີຄວາມເປັນມືອາຊີບ ເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງສາມາດເຊື່ອມໂຍງ ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້;

ວິທະຍາໄລຄູສະຫວັນນະເຂດຄໍານຶງເຖິງຄວາມສໍາຄັນຂອງການສົ່ງເສີມໃຫ້ຄູອາຈານ ແລະ ນັກສຶກສາຝຶກຫັດວິຊາຊີບໄດ້ໃຊ້ຂະບວນການວິໄຈໃນການພັດທະນາວິຊາຊີບ ແລະ ຜູ້ຮຽນຢ່າງຈິງຈັງ ຄວາມຮູ້ທີ່ໄດ້ຈາກການລົງມືການປະຕິບັດຈິງຈະສົ່ງຜົນໂດຍກົງຕໍ່ການພັດທະນາຄຸນນະພາບຜູ້ຮຽນ ນອກຈາກນີ້ "ການວິໄຈ" ຍັງເປັນນະວັດຕະກໍາສໍາຄັນໃນການສ້າງຄວາມກ້າວໜ້າທາງວິຊາສ້າງຄູ ແລະ ເປັນເຄື່ອງມືໃນການພັດທະນາທາງສະຕິປັນຍາ (intellectual capital) ທີ່ສົ່ງເສີມໃຫ້ເກີດການຮຽນຮູ້ ແລະ ການພັດທະນານະວັດຕະກໍາໃໝ່ໆຜົນຜະລິດ ແລະ ສິ່ງປະດິດຄິດຄົ້ນໃໝ່ໆ ທີ່ສ້າງສັນນໍາໄປສູ່ພື້ນຖານຄວາມຮູ້ (knowledge – based society) ເຊິ່ງຈະເປັນ "ສັງຄົມແຫ່ງວິຊາຊີບຄູ" ທີ່ມີການໃຊ້ຄວາມຮູ້ໂດຍມີການວິໄຈເປັນຖານເຊິ່ງການຝຶກຫັດວິຊາຊີບຂອງນັກສຶກສາຈຶ່ງກໍານົດໃຫ້ມີການວິໄຈໃນຊັ້ນຮຽນໃຫ້ນັກສຶກສາໄດ້ຝຶກການປະຕິບັດຈິງໃນການນໍາຄວາມຮູ້ ທິດສະດີການວິໄຈໃນຊັ້ນຮຽນມາພັດທະນາວິທີການຮຽນການສອນ ຈູງໃຈໃຫ້ຜູ້ຮຽນເກີດຄວາມຢາກຮູ້ຢາກຮຽນ ພັດທະນາພຶດຕິກໍາຜູ້ຮຽນເພື່ອເພີ່ມຄວາມສໍາເລັດທາງການຮຽນ ແລະ ການສ້າງບັນຍາກາດການຮຽນຮູ້ໃຫ້ເກີດການຮຽນຮູ້ຢ່າງມີປະສິດທິພາບ ການຝຶກຫັດວິຊາຊີບເປັນໃຈກາງສໍາຄັນຂອງຂະບວນການສ້າງຄູເພາະເປັນ ຂະບວນການພາກການປະຕິບັດທີ່ຈະຊ່ວຍເສີມສ້າງນັກສຶກສາຄູໃຫ້ເປັນຜູ້ມີຄວາມຮັກຕໍ່ອາຊີບຄູ ແລະ ມີຄວາມຮູ້ຄວາມສາມາດທີ່ຈະການປະຕິບັດງານໃນໜ້າທີ່ຄູໄດ້ຢ່າງມີປະສິດທິພາບເປັນທີ່ເພິ່ງພໍໃຈແກ່ໜ່ວຍງານຜູ້ໃຊ້ຄູ ຂະບວນການພາກການປະຕິບັດຕ່າງໆ ທີ່ຈະຊ່ວຍໃຫ້ການສ້າງຄູມີຄຸນນະພາບທີ່ເພິ່ງພໍໃຈໄດ້ນັ້ນຈໍາເປັນຢ່າງຍິ່ງທີ່ຈະຕ້ອງໄດ້ຮັບຄວາມຮ່ວມມື ແລະ ຄວາມຊ່ວຍເຫຼືອຈາກໜ່ວຍງານຜູ້ໃຊ້ຄູຢ່າງຈິງຈັງ ເພາະໜ່ວຍງານຜູ້ໃຊ້ຄູຄືສະຖານທີ່ຝຶກການປະຕິບັດເປັນຕົວແບບແບບທີ່ຈະໃຫ້ນັກສຶກສາຄູໄດ້ຮຽນຮູ້ຈາກສະຖານນະການຈິງຕິດພັນກັບການຮຽນຮູ້ພາກທິດສະດີຈາກສະຖາບັນໃນທຸກໆ ຂັ້ນຕອນ ການຝຶກຫັດວິຊາຊີບຈຶ່ງເປັນໃຈກາງສໍາຄັນຂອງຂະບວນການສ້າງຄູ (ວິໄສທັດວິທະຍາໄລຄູສະຫວັນນະເຂດ, 2020 -2025).

ການຝຶກຫັດວິຊາຊີບວ່າເປັນໃຈກາງໃນການສ້າງຄູເພາະເປັນການກຽມນັກສຶກສາຄູໃຫ້ພ້ອມທີ່ຈະໄປເປັນຄູທີ່ດີໃນອະນາຄົດ ໃນຂະນະຝຶກນັກສຶກສາຄູສາມາດພັດທະນາຄວາມຮູ້ໃນເນື້ອໃນບູລະນະການກັບວິທີສອນລວມທັງດ້ານເຕັກນິກວິທີທີ່ສາມາດນໍາຄວາມຮູ້ໄປໃຊ້ການປະຕິບັດງານໃນໜ້າທີ່ຄູດ້ານຕ່າງໆ ເຊັ່ນ: ວຽກສິດສອນ, ກິດຈະການນັກຮຽນ, ການແນະແນວ, ການພັດທະນາຕົນ, ພັດທະນາສັງຄົມ ແລະ ຍັງມີໂອກາດພັດທະນາດ້ານຄຸນລັກສະນະເພື່ອໃຫ້ມີລັກສະນະທີ່ເໝາະສົມສໍາລັບການເປັນຄູ ເຊັ່ນ: ເປັນຜູ້ທີ່ມີໃຈຮັກໃນວິຊາຊີບຄູມີຄ່ານິຍົມທີ່ເພິ່ງພໍໃຈ, ມີຈັນຍາບັນໃນວິຊາຊີບຄູນອກຈາກນີ້ຫັດວິຊາຊີບຍັງເປັນການ ເນັ້ນຂະບວນການພາກການປະຕິບັດທີ່ຊ່ວຍເສີມສ້າງທັງຄຸນນະພາບການສ້າງຄູໃຫ້ມີຄວາມສາມາດໃນການການປະຕິບັດງານໃນໜ້າທີ່ຂອງຄູໄດ້ເປັນຢ່າງດີ ຊາຕີ ຝ່າຍຄໍາຕາ ແລະ ວັນນະທິພາ ຮອດແຮງຄໍາ (2551,ໜ້າ.152-163). (ສາວິຕີ ໂລຈະນະສະມິດ ແລະ ວັນນະທິພາ ຮອດແຮງຄໍາ, 2548, ໜ້າ.1- 9) ການສ້າງຄູຂອງສະຖາບັນລ້ວນໃຫ້ຄວາມສໍາຄັນຕໍ່ການຈັດໃຫ້ນັກສຶກສາມີໂອກາດຝຶກການປະຕິບັດກິດຈະກໍາຕ່າງໆ ແລະ ຫັດວິຊາຊີບ ຈະຊ່ວຍເສີມສ້າງໃຫ້ນັກສຶກສາເປັນຜູ້ມີຄວາມສາມາດ ແລະ ມີທັກສະໃນດ້ານຕ່າງໆ ທີ່ຈະຮັບຜິດຊອບໃນດ້ານການສອນ ເຖິງຢ່າງໃດກໍຕາມຜົນການສໍາຫຼວດບັນຫາການຝຶກຫັດວິຊາຊີບທີ່ຜ່ານມາ ພົບວ່າການຝຶກຫັດວິຊາຊີບມີບັນຫາເກີດຂຶ້ນຫຼາຍດ້ານ ເຊັ່ນ: ບັນຫາດ້ານການກຽມການສອນ (ທິບວັນ ນຸ່ມປະເສີດ, 2542; ວັນນະທິພາ ຮອດແຮງຄໍາ ແລະ ພາວິນີ ສີສຸກວັດທະນານັນ, 2545).

ໂຮງຮຽນຝຶກຫັດວິຊາຊີບ ແລະ ບັນຫາການຈັດກຽມປະສົບການວິຊາຊີບໃຫ້ກັບນັກສຶກສາ/ນັກສຶກສາ (ທິບວັນ ນຸ່ມປະເສີດ, 2542) ຈາກປະສົບການການນິເທດນັກສຶກສາຝຶກຫັດວິຊາຊີບຂອງສາຂາສ້າງຄູປະຖົມສຶກສາມະຫາວິທະຍາໄລລາຊະພັດຊຽງໃໝ່ ສ່ວນໃຫຍ່ພົບບັນຫາກ່ຽວກັບການວິໄຈໃນຊັ້ນຮຽນສອດຄ່ອງກັບຜົນການ

ວິໄຈຂອງ ພາວິນີ ສີສຸກວັດທະນານັນ (2545 ອ້າງອີງໃນສີລະດາ ທອງເຊື້ອ ແລະ ນະລິມົນ ສຣາທະພັນ, 2557, ໜ້າ.193-204 ) ພົບວ່ານັກສຶກສາມີບັນຫາການສະຫຼຸບຜົນການວິເຄາະຂໍ້ມູນເປັນທໍາອິດ ຮອງລົງມາຄືບັນຫາການວິເຄາະຂໍ້ມູນ ການກໍານົດຊື່ວິໄຈ ການຂຽນຄວາມເປັນມາ ແລະ ຄວາມສໍາຄັນຂອງບັນຫາການວິໄຈ ແລະ ການຂຽນຜົນການວິໄຈ ແລະ ອະພິປາຍຜົນ ທັງນີ້ອາດຈະເປັນເພາະນັກສຶກສາຍັງຂາດປະສົບການໃນການວິໄຈໃນຊັ້ນຮຽນນັກສຶກສາມີປະສົບການສະເພາະການຮຽນໃນລາຍວິຊາສ້າງຄູວິໄຈໃນຊັ້ນຮຽນ ເຊິ່ງອາດຈະມີການຝຶກການປະຕິບັດທີ່ບໍ່ພຽງພໍຈຶ່ງໃຫ້ນັກສຶກສາມີບັນຫາໃນຈຸດເຫຼົ່ານີ້ການພັດທະນາຄວາມຮູ້ທັກສະໃນການການປະຕິບັດກິດຈະກໍາ ຫຼື ປ່ຽນແປງພຶດຕິກໍາການການປະຕິບັດວິໄຈໃນຊັ້ນຮຽນຄວນໃຫ້ນັກສຶກສາຝຶກຫັດວິຊາຊີບໄດ້ຮຽນຮູ້ທັງຄວາມຮູ້ ແລະ ທັກສະໂດຍຄໍານຶງເຖິງຄວາມຮູ້ພື້ນຖານ ປະສົບການ ແລະ ຄວາມສາມາດເດີມຂອງຕົນເອງ ຈາກການທົບທວນນະວັດຕະກໍາພົບວ່າ ການ coaching ເປັນວິທີການໃນການພັດທະນາຄວາມຮູ້ ແລະ ຝຶກທັກສະການການປະຕິບັດຂອງບຸກຄົນໂດຍ ຜູ້ທີ່ໃຫ້ຄໍາປຶກສາແນະນໍາ ເຊິ່ງເປັນຜູ້ທີ່ມີທັກສະ, ມີປະສົບການ, ຄວາມຊ່ຽວຊານໃນເລື່ອງທີ່ coaching ແລະ ເປັນຜູ້ໃຫ້ຄວາມຊ່ວຍເຫຼືອຄວາມສໍາພັນທີ່ດີຂອງການໃຫ້ຄໍາປຶກສາແນະນໍາ ແລະ ຜູ້ການປະຕິບັດໃຫ້ຜູ້ການປະຕິບັດເກີດຄວາມເພິ່ງພໍໃຈໃນການການປະຕິບັດເປັນວິທີທີ່ນໍາມາໃຊ້ກັນຫຼາຍໃນການຝຶກທັກສະຂອງບຸກຄົນເພື່ອນໍາໄປສູ່ການປ່ຽນແປງການການປະຕິບັດ ຫຼື ປ່ຽນແປງພຶດຕິກໍາ (Haas, 2535,p.54-58) ການວິໄຈຄັ້ງນີ້ນໍາຫຼັກການ coaching ເຊິ່ງນິຍົມໃຊ້ຫຼາຍ ໃນວົງການແພດເພື່ອດູແລຜູ້ປ່ວຍຢ່າງໃກ້ຊິດໃນການໃຫ້ຄໍາປຶກສາແນະນໍາ ມາບູລະນະການກັບຫຼັກການວິໄຈໃນຊັ້ນຮຽນການນໍາແນວຄິດການ coaching ມາເພີ່ມຄວາມຮູ້ ແລະ ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ຕາມແນວຄິດຂອງ ແຮກ (Haas, 2535, p.54-58) ແລະ ການທົບທວນນະວັດຕະກໍາປະກອບດ້ວຍຂະບວນການ coaching 4 ຂັ້ນຕອນ ຄື: 1) ການປະເມີນ ແລະ ວິເຄາະບັນຫາໃນການການປະຕິບັດກິດຈະກໍາ 2) ການວາງແຜນການປະຕິບັດກິດຈະກໍາ 3) ການການປະຕິບັດກິດຈະກໍາຕາມແຜນທີ່ວາງໄວ້ 4) ການປະເມີນຜົນການການປະຕິບັດຕາມກິດຈະກໍາໂດຍໃຫ້ນັກສຶກສາຝຶກຫັດວິຊາຊີບຝຶກການປະຕິບັດກິດຈະກໍາ ການວິໄຈໃນຊັ້ນຮຽນ coaching ເປັນຜູ້ແນະນໍາໃຫ້ຂໍ້ມູນເພີ່ມເຕີມ ແລະ ໃຫ້ຂໍ້ມູນສະທ້ອນຄືນ ໃຫ້ນັກສຶກສາ ວິເຄາະການຝຶກການປະຕິບັດກິດຈະກໍາດ້ວຍຕົວເອງ ແລະ coaching ແລກປ່ຽນປະສົບການເຊິ່ງກັນ ແລະ ກັນໃນຂັ້ນຕອນຂອງການໃຫ້ຄໍາປຶກສາແນະນໍາໜ້າຈະສົ່ງຜົນຕໍ່ການພັດທະນາຄວາມສາມາດໃນການວິໄຈໃນຊັ້ນຮຽນໄດ້ຢ່າງມີປະສິດທິພາບ.

ດັ່ງນັ້ນ, ຜູ້ວິໄຈສົນໃຈສຶກສາຜົນການ coaching ຕໍ່ຄວາມຮູ້ ແລະ ຄວາມສາມາດໃນການວິໄຈໃນຊັ້ນຮຽນໄດ້ຢ່າງຖືກຕ້ອງ ແລະ ສຶກສາແນວທາງແກ້ໄຂບັນຫາທີ່ເກີດຂຶ້ນ ຜົນການວິໄຈດັ່ງກ່າວຈະເປັນຂໍ້ມູນໃນການກຽມການໃນດ້ານຕ່າງໆລວມທັງການປັບປຸງການດໍາເນີນການຝຶກຫັດວິຊາຊີບທັງກ່ອນ ແລະ ລະຫວ່າງການຝຶກຫັດວິຊາຊີບທັງນີ້ເພື່ອໃຫ້ເປັນໄປຕາມເປົ້າໝາຍຂອງຫຼັກສູດ ແລະ ສອດຄ່ອງກັບພາກວິຊາປະຖົມສຶກສາ ວິທະຍາໄລຄູສະຫວັນນະເຂດ.

## ຈຸດປະສົງ

1. ເພື່ອສຶກສາຄວາມຮູ້ ແລະ ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດ.
2. ເພື່ອສຶກສາຜົນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດຫຼັງການ coaching.

## ວິທີດຳເນີນການວິໄຈ

ແບບການວິໄຈເປັນການວິໄຈເຄິ່ງທົດລອງ (quasi experimental research)ດຳເນີນການທົດລອງຕາມແບບແຜນການວິໄຈ one group pretest-posttest design. ເຊິ່ງມີຮູບແບບດັ່ງນີ້

| ທົດສອບກ່ອນຮຽນ | ການທົດລອງ | ທົດສອບຫຼັງຮຽນ |
|---|---|---|
| $T_1$ | X | $T_2$ |

ສັນຍະລັກທີ່ໃຊ້ໃນແບບແຜນການວິໄຈ

$T_1$ ໝາຍເຖິງທົດສອບກ່ອນຮຽນ

X ໝາຍເຖິງການທົດລອງໃຊ້ແຜນການ coaching ການວິໄຈໃນຊັ້ນຮຽນ

$T_2$ ໝາຍເຖິງທົດສອບຫຼັງຮຽນ

### ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ເປັນນັກສຶກສາປີສຸດທ້າຍ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ລະດັບອະນຸປະລິນຍາວິທະຍາໄລຄູສະຫວັນນະເຂດ ຈຳນວນ 70 ຄົນ ທີ່ລົງຝຶກຫັດວິຊາຊີບ ໃນພາກຮຽນທີ 2. ກຸ່ມຕົວຢ່າງແມ່ນນັກສຶກສາລະດັບອະນຸປະລິນຍາ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດທີ່ຝຶກຫັດວິຊາຊີບໃນພາກຮຽນທີ 2 ຈຳນວນ 3 ຄົນ, ຍິງ 2 ຄົນ ໂດຍຜູ້ວິໄຈເລືອກກຸ່ມຕົວຢ່າງແບບເຈາະຈົງ.

### ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ແບ່ງອອກເປັນ 2 ປະເພດ ດັ່ງນີ້:

1). ເຄື່ອງມືທີ່ໃຊ້ໃນການທົດລອງ ຄື: ແຜນການ coaching ການວິໄຈໃນຊັ້ນຮຽນທີ່ຜູ້ວິໄຈສ້າງຂຶ້ນຈາກການສຶກສາເອກະສານ ແລະ ວິໄຈທີ່ກ່ຽວຂ້ອງໂດຍໃຊ້ແນວຄິດການ coaching ຂອງແຮັສ (Haas,  2535).

2). ເຄື່ອງມືທີ່ໃຊ້ໃນການເກັບຮອບຮອມຂໍ້ມູນ ຄື:

- ແບບທົດສອບວັດຄວາມຮູ້ກ່ຽວກັບການວິໄຈໃນຊັ້ນຮຽນ ໃຊ້ທົດສອບຄວາມຮູ້ຄວາມເຂົ້າໃຈກ່ອນ ແລະ ຫຼັງຝຶກຫັດວິຊາຊີບ ເປັນແບບທົດສອບແບບເລືອກຕອບ 4 ຕົວເລືອກ
- ແບບປະເມີນຄວາມສາມາດການວິໄຈໃນຊັ້ນຮຽນ ຂອງນັກສຶກສາຝຶກຫັດວິຊາຊີບເປັນມີຂໍ້ຄຳຖາມ ຈຳນວນ 20 ຂໍ້ ແຕ່ລະຂໍ້ຄຳຖາມມີຄຳຕອບໃຫ້ເລືອກ 3 ລະດັບ ຄື: ການປະຕິບັດທຸກຄັ້ງ, ການປະຕິບັດເກືອບທຸກຄັ້ງ ແລະ ການປະຕິບັດບາງຄັ້ງ. ໃນຕອນທ້າຍແບບປະເມີນມີຂໍ້ສະເໜີແນະເພີ່ມເຕີມເພື່ອໃຫ້ນັກສຶກສາຂຽນຂໍ້ຄິດເຫັນເພີ່ມເຕີມກ່ຽວກັບການວິໄຈໃນຊັ້ນຮຽນ.
- ແບບປະເມີນຄຸນນະພາບລາຍງານການວິໄຈ ຂອງນັກສຶກສາຝຶກຫັດວິຊາຊີບຄູ ລັກສະນະຄຳຖາມເປັນແບບມາດຕະຖານ 5 ລະດັບຄື: ດີຫຼາຍ, ດີ, ປານກາງ, ໜ້ອຍ ແລະ ປັບປຸງ ໂດຍກຳນົດເກນການໃຫ້ຄະແນນເປັນ Scoring rubrics.

### ການຮອບຮອມຂໍ້ມູນ

ຜູ້ວິໄຈໄດ້ດຳເນີນການທົດລອງ ແລະ ເກັບຮອບຮອມຂໍ້ມູນໂດຍຂໍຄວາມຮ່ວມມືຈາກອາຈານທີ່ປຶກສາຈາກພາກວິຊາຫຼັກສູດ ແລະ ການສອນ ມີການປະຊຸມຊີ້ແຈງວິທີການເກັບຮອບຮອມຂໍ້ມູນ ມີລຳດັບຂັ້ນຕອນດັ່ງນີ້:

- ນິເທດນັກສຶກສາຝຶກຫັດວິຊາຊີບເພື່ອແນະນຳຂັ້ນຕອນການຝຶກຫັດວິຊາຊີບໃນດ້ານການວິໄຈໃນຊັ້ນຮຽນທົດສອບກ່ອນຮຽນ (pre-test)ໂດຍໃຊ້ແບບທົດສອບວັດຄວາມຮູ້ຄວາມເຂົ້າໃຈການວິໄຈໃນຊັ້ນຮຽນ
- ດຳເນີນກິດຈະກຳການວິໄຈໃນຊັ້ນຮຽນຕາມແຜນການ coaching ທີ່ຜູ້ວິໄຈສ້າງຂຶ້ນ 4 ຂັ້ນຕອນເລີ່ມຕົ້ນຂັ້ນຕອນທີ 1 ການປະເມີນ ແລະ ວິເຄາະບັນຫາ ຂັ້ນຕອນທີ 2 ການວາງແຜນການການປະຕິບັດກິດຈະກຳ

ການວິໄຈ ຂັ້ນຕອນທີ 3 ການການປະຕິບັດກິດຈະກຳຕາມແຜນທີ່ວາງໄວ້ ແລະ ຂັ້ນຕອນທີ 4 ການປະເມີນຜົນການການປະຕິບັດໂດຍອາຈານທີ່ປຶກສາ ຈຳນວນ 9 ແຜນການ coaching ແຜນລະ 3 ຊົ່ວໂມງ ລວມທັງໝົດຈຳນວນ 27 ຊົ່ວໂມງ.

- ຫຼັງຈາກນັກສຶກສາຝຶກຫັດວິຊາຊີບວິໄຈໃນຊັ້ນຮຽນ ທົດສອບຫຼັງຮຽນ (post-test) ໂດຍໃຊ້ແບບທົດສອບວັດຄວາມຮູ້ຄວາມເຂົ້າໃຈການວິໄຈໃນຊັ້ນຮຽນຊຸດເດີມ ວິເຄາະຄວາມຮູ້ຂອງນັກສຶກສາໃນການວິໄຈໃນຊັ້ນຮຽນ ແລະ ແບບປະເມີນຄວາມສາມາດໃນການວິໄຈໃນຊັ້ນຮຽນ
- ອາຈານທີ່ປຶກສາກວດຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຄູໂດຍໃຊ້ແບບປະເມີນຄຸນນະພາບວິໄຈຂອງສູນຝຶກຫັດວິຊາຊີບ
- ຮອບຮວມຂໍ້ມູນທັງໝົດ ແລະ ວິເຄາະໂດຍວິທີການທາງສະຖິຕິ
- ສະຫຼຸບຜົນການທົດລອງ

**ການວິເຄາະຂໍ້ມູນ**

ນຳຂໍ້ມູນທີ່ເກັບກຳ ແລະ ຮອບຮວມໄດ້ມາວິເຄາະ ດັ່ງນີ້:

- ວິເຄາະປຽບທຽບຄ່າສະເລ່ຍຂອງຄະແນນຄວາມຮູ້ການວິໄຈໃນຊັ້ນຮຽນ ກ່ອນ ແລະ ຫຼັງການ coaching ຂອງນັກສຶກສາຝຶກຫັດວິຊາຊີບຈຳນວນ 3 ຄົນ ໂດຍໃຊ້ການທົດສອບຄ່າ (t-test)ແບບ Dependent Sample.
- ວິເຄາະຄວາມສາມາດຂອງນັກສຶກສາໃນການວິໄຈໃນຊັ້ນຮຽນແປຜົນໂດຍປຽບທຽບກັບເກນການແປຄວາມໝາຍຂອງຄະແນນສະເລ່ຍໂດຍໃຊ້ເກນຂອງ ວິຊຽນ ເກດສິງ (2538, ໜ້າ.9)
- ວິເຄາະຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງການ coaching ແປຜົນໂດຍປຽບທຽບກັບເກນການແປຄວາມໝາຍຂອງຄະແນນສະເລ່ຍ ໂດຍໃຊ້ເກນຂອງ ວິຊຽນ ເກດສິງ (2538, ໜ້າ. 9).
- ການວິເຄາະຂໍ້ມູນທາງຄຸນນະພາບ ໂດຍການວິເຄາະເນື້ອໃນຈາກຂໍ້ສະເໜີແນະເພີ່ມເຕີມທ້າຍແບບປະເມີນຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ.

**ຜົນການວິໄຈ**

1. ຜົນການປຽບທຽບຄ່າສະເລ່ຍຂອງຄະແນນຄວາມຮູ້ໃນການວິໄຈໃນຊັ້ນຮຽນຂອງນັກສຶກສາ ຝຶກຫັດວິຊາຊີບກ່ອນ ແລະ ຫຼັງການ coaching ໄດ້ຜົນດັ່ງຕາຕະລາງທີ 1.

ຕາຕະລາງທີ 1 ການປຽບທຽບຄະແນນຄ່າສະເລ່ຍຂອງ ນັກສຶກສາ ກ່ອນ ແລະ ຫຼັງການ coaching.

| | ຄ່າສະຖິຕິ | | | | |
|---|---|---|---|---|---|
| **ການທົດສອບ** | n | X | S.D. | t | df |
| **ກ່ອນການ coaching** | 3 | 13.67 | 1.15 | 2.648 | 2.162 |
| **ຫຼັງການ coaching** | 3 | 16 | 1 | | |

*p < .05

ຈາກຕາຕະລາງທີ 1 ພົບວ່າຄ່າສະເລ່ຍຄະແນນຄວາມຮູ້ການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງການ coaching ສູງກວ່າກ່ອນການ coaching ຢ່າງມີລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ .05

ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດຫຼັງການ coaching ໂດຍພາບລວມຢູ່ໃນລະດັບສູງ ຜົນປາກົດດັ່ງຕາຕະລາງທີ 2.

ຕາຕະລາງທີ 2 ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດຫຼັງການ coaching.

| ຂໍ້ | ຄວາມສາມາດໃນການວິໄຈໃນຊັ້ນຮຽນ | X | S.D. | ການແປຜົນ |
|---|---|---|---|---|
| 1 | ການລະບຸສາເຫດຂອງບັນຫາການຮຽນ/ພຶດຕິກຳຂອງນັກຮຽນ | 3.00 | 0 | ສູງ |
| 2 | ກຳນົດວິທີການແກ້ບັນຫາການຮຽນ/ພຶດຕິກຳຂອງນັກຮຽນ | 2.33 | 0.6 | ປານກາງ |
| 3 | ການກຳນົດບັນຫາການວິໄຈໄດ້ຢ່າງຊັດເຈນ | 3.00 | 0 | ສູງ |
| 4 | ການນຳນະວັດຕະກຳມາໃຊ້ໃນການແກ້ບັນຫາການຮຽນ/ພຶດຕິກຳຂອງນັກຮຽນ | 2.67 | 0.6 | ສູງ |
| 5 | ການກຳນົດຈຸດປະສົງຂອງການວິໄຈໄດ້ຢ່າງຊັດເຈນເໝາະສົມ | 3.00 | 0 | ສູງ |
| 6 | ການຕັ້ງສົມມຸດຕິຖານການວິໄຈໄດ້ຢ່າງຊັດເຈນເໝາະສົມ | 2.33 | 0.6 | ປານກາງ |
| 7 | ການວິເຄາະ ສັງເຄາະເອກະສານ ແລະ ວິໄຈທີ່ກ່ຽວຂ້ອງກັບເລື່ອງທີ່ວິໄຈໄດ້ຢ່າງຖືກຕ້ອງ | 1.67 | 0.6 | ປານກາງ |
| 8 | ການກຳນົດຂອບເຂດການວິໄຈໄດ້ | 2.67 | 0.6 | ສູງ |
| 9 | ການລະບຸຕົວປ່ຽນທີ່ໃຊ້ໃນການວິໄຈໄດ້ຢ່າງຖືກຕ້ອງ | 3.00 | 0 | ສູງ |
| 10 | ການຊອກວິທີການ ຫຼື ນະວັດຕະກຳມາໃຊ້ໃນການວິໄຈໄດ້ຢ່າງເໝາະສົມ | 2.33 | 0.6 | ປານກາງ |
| 11 | ການອອກແບບການວິໄຈແບບຕ່າງໆ ທີ່ໃຊ້ໃນການວິໄຈໃນຊັ້ນຮຽນ | 2.33 | 0.6 | ປານກາງ |
| 12 | ການສ້າງ ແລະ ພັດທະນາເຄື່ອງມືທີ່ໃຊ້ໃນການວິໄຈໃນຊັ້ນຮຽນ | 2.67 | 0.6 | ສູງ |
| 13 | ການກວດສອບຄຸນນະພາບຂອງເຄື່ອງມືທີ່ໃຊ້ໃນການວິໄຈ ເຊັ່ນ ຄວາມທ່ຽງທຳ ເປັນຕົ້ນ | 2.00 | 0 | ປານກາງ |
| 14 | ການໃຊ້ເຕັກນິກ ແລະ ວິທີການເກັບຂໍ້ມູນວິໄຈຊະນິດຕ່າງໆ ໄດ້ຢ່າງມີປະສິດທິພາບ | 2.00 | 0 | ປານກາງ |
| 15 | ການເລືອກໃຊ້ເຕັກນິກການວິເຄາະທາງສະຖິຕິພື້ນຖານໄດ້ຢ່າງຖືກຕ້ອງ | 3.00 | 0 | ສູງ |
| 16 | ການຂຽນໂຄງການວິໄຈໃນຊັ້ນຮຽນ ເພື່ອເປັນແນວທາງໃນການວິໄຈໄດ້ຢ່າງຖືກຕ້ອງ | 2.67 | 0.6 | ລະດັບສູງ |
| 17 | ການນຳສະເໜີຂໍ້ມູນໃຫ້ມີຄວາມກະທັດຮັດ ຊັດເຈນ ເຂົ້າໃຈງ່າຍ ບໍ່ສັບຊ້ອນ | 1.67 | 0.6 | ປານກາງ |
| 18 | ການສະຫຼູບຜົນການວິເຄາະຂໍ້ມູນໄດ້ຢ່າງຖືກຕ້ອງ | 2.00 | 0 | ປານກາງ |
| 19 | ການຂຽນລາຍງານການວິໄຈໄດ້ຢ່າງຖືກຕ້ອງ | 2.00 | 0 | ປານກາງ |
| 20 | ການສະຫຼູບຜົນລາຍງານການວິໄຈ | 2.67 | 0.6 | ສູງ |
| **ພາບລວມ** | | 2.45 | 0.32 | ສູງ |

ຈາກຕາຕະລາງທີ 2 ພົບວ່າຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຄູຫຼັງການ coaching ໂດຍພາບລວມມີຄວາມສາມາດໃນການວິໄຈໃນຊັ້ນຮຽນຢູ່ໃນລະດັບສູງ ( $x$ = 2.45, S.D= 0.32) ຜົນການກວດຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງການ coaching ພົບວ່າລາຍ

ງານການວິໄຈມີຄຸນນະພາບໂດຍພາບລວມຢູ່ໃນລະດັບປານກາງ ຍົກເວັ້ນດ້ານເອກະສານ ແລະ ວິໄຈທີ່ກ່ຽວຂ້ອງຢູ່ໃນລະດັບໜ້ອຍ ຜົນປາກົດດັ່ງຕາຕະລາງທີ 3.

ຕາຕະລາງທີ 3 ຜົນການກວດຄຸນນະພາບລາຍງານການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ

| **ລາຍການທີ່ປະເມີນ** | **ລະດັບຜົນການປະເມີນ** | | |
|---|---|---|---|
| | X | S.D. | ການແປຜົນ |
| **1. ຄຸນຄ່າຂອງວິໄຈ** | **3.5** | **0.64** | **ດີ** |
| 1.1 ເປັນວິໄຈທີ່ມີຄຸນຄ່າ ມີຄວາມສຳຄັນ | 3.33 | 1.5 | ປານກາງ |
| 1.2 ເປັນວິໄຈທີ່ເປັນການແກ້ບັນຫາໃນການຮຽນການສອນ | 3.67 | 0.6 | ດີ |
| **2. ຊື່ເລື່ອງ** | 3.34 | 0.42 | ປານກາງ |
| 2.1 ຊື່ເລື່ອງສອດຄ່ອງກັບຈຸດປະສົງຂອງການວິໄຈ | 3.00 | 0 | ປານກາງ |
| 2.2 ມີຄວາມກະທັດຮັດ ຊັດເຈນ | 3.67 | 0.6 | ດີ |
| **3. ທີ່ມາ ແລະ ຄວາມສຳຄັນຂອງບັນຫາ** | **2.67** | **0.35** | **ປານກາງ** |
| 3.1 ກ່າວເຖິງທີ່ມາຂອງບັນຫາຊັດເຈນ | 3.00 | 0 | ປານກາງ |
| 3.2 ກຳນົດເປົ້າໝາຍຂອງການວິໄຈຊັດເຈນ ແລະ ເໝາະສົມ | 3.00 | 0 | ປານກາງ |
| 3.3 ກຳນົດຂອບເຂດຂອງບັນຫາການວິໄຈຢ່າງຊັດເຈນ | 2.33 | 0.6 | ໜ້ອຍ |
| 3.4 ໃຫ້ນິຍາມຄຳສັບສະເພາະທີ່ສຳຄັນຢ່າງເໝາະສົມ | 2.33 | 0.6 | ໜ້ອຍ |
| **4. ເອກະສານ ແລະ ວິໄຈທີ່ກ່ຽວຂ້ອງ** | **2.5** | **0.21** | **ປານກາງ** |
| 4.1 ອ້າງອີງທິດສະດີ ແລະ ຜົນການວິໄຈທີ່ກ່ຽວຂ້ອງຢ່າງພຽງພໍ ແລະ ກົງກັບເລື່ອງ | 2.00 | 1.7 | ໜ້ອຍ |
| 4.2 ການຈັດລຳດັບເລື່ອງເປັນໄປຢ່າງເໝາະສົມ | 3.00 | 2.0 | ປານກາງ |
| **5. ວິທີດຳເນີນການວິໄຈ** | **3.45** | **0.70** | **ດີ** |
| 5.1 ກຳນົດປະຊາກອນ ແລະ ກຸ່ມເປົ້າໝາຍໄດ້ຊັດເຈນ | 3.00 | 2.0 | ປານກາງ |
| 5.2 ເຄື່ອງມື ແລະ ວິທີການໃນການຮອບຮອມຂໍ້ມູນມີຄວາມເໝາະສົມສອດຄ່ອງກັບຈຸດບັນຫາ | 3.67 | 0.6 | ດີ |
| 5.3 ວິທີວິເຄາະຂໍ້ມູນ ຫຼື ສະຖິຕິທີ່ໃຊ້ມີຄວາມເໝາະສົມ | 3.67 | 1.2 | ດີ |
| **6. ຜົນການວິເຄາະຂໍ້ມູນ** | **3.34** | **0.28** | **ປານກາງ** |
| 6.1 ສະເໜີຜົນຂອງການວິເຄາະຢ່າງຖືກຕ້ອງຊັດເຈນ | 3.67 | 0.6 | ດີ |
| 6.2 ແປຄວາມໝາຍຜົນການວິເຄາະຂໍ້ມູນຖືກຕ້ອງ | 3.00 | 1.0 | ປານກາງ |
| **7. ການສະຫຼຸບຜົນ ອະພິປາຍຜົນ ແລະ ຂໍ້ສະເໜີແນະ** | **3.22** | **0.25** | **ປານກາງ** |
| 7.1 ສະຫຼຸບຜົນການວິໄຈຕາມຈຸດປະສົງ | 3.00 | 1.7 | ປານກາງ |
| 7.2 ອະພິປາຍຜົນໄດ້ສົມເຫດສົມຜົນ | 3.33 | 1.5 | ປານກາງ |
| 7.3 ຂໍ້ສະເໜີແນະມີຄວາມເໝາະສົມ | 3.33 | 1.2 | ປານກາງ |
| **ພາບລວມ** | **3.11** | 0.96 | ປານກາງ |

ຈາກຕາຕະລາງທີ 3 ພົບວ່າຜົນການກວດຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຄູຫຼັງການ coaching ໂດຍພາບລວມຄຸນນະພາບວິໄຈໃນຊັ້ນຮຽນຢູ່ໃນລະດັບປານກາງ( $x$ = 3.11, S.D. = 0.96) ໃນດ້ານເອກະສານ ແລະ ວິໄຈທີ່ກ່ຽວຂ້ອງຢູ່ໃນລະດັບປານກາງ ( $x$ = 2.50, S.D. = 0.21)ຍັງມີຄະແນນສະເລ່ຍຕ່ຳ

ກວ່າໝູ່ ຜົນການວິເຄາະເນື້ອໃນສະຫຼຸບໄດ້ວ່າສູນຝຶກຫັດວິຊາຊີບຄວນຈັດຝຶກອົບຮົມການວິໄຈໃນຊັ້ນຮຽນເພີ່ມເຕີມເພື່ອກຽມຄວາມພ້ອມ ການວິໄຈໃນຊັ້ນຮຽນບໍ່ຄົບທຸກຂັ້ນຕອນເພາະຊ່ວງເວລາສັ້ນພຽງ 1 ພາກຮຽນ ເຮັດໃຫ້ນັກສຶກສາໃຊ້ວິທີການສຳຮຽນແບບວິໄຈ ຂາດການທົບທວນນະວັດຕະກຳທີ່ກ່ຽວຂ້ອງ ແລະ ຂາດການອ້າງອີງ ການ coaching ເປັນວິທີການທີ່ຊ່ວຍໃຫ້ນັກສຶກສາໄດ້ພັດທະນາທັກສະ, ຂະບວນການຄິດ, ຄວາມຮູ້ ແລະ ການການປະຕິບັດໃຫ້ປະສົບຜົນສຳເລັດ coaching ທີ່ດີຈະສ້າງຄວາມໜ້າເຊື່ອຖື ແລະ ໄວ້ວາງໃຈ.

## ຜົນການວິໄຈ ແລະ ອະພິປາຍຜົນ

ຈາກຜົນການວິໄຈມີຈຸດສຳຄັນທີ່ນຳມາອະພິປາຍຜົນການສຶກສາ ດັ່ງນີ້:

1. ຄວາມຮູ້ໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງສູງກວ່າ ກ່ອນການ coaching ຢ່າງມີລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ .05 ສອດຄ່ອງກັບຜົນການວິໄຈຂອງ ອຸບົນ ພວງມາລາ(2552) ສຶກສາການພັດທະນາຂະບວນການວິໄຈໃນຊັ້ນຮຽນແບບມີສ່ວນຮ່ວມຂອງນັກສຶກສາຝຶກຫັດວິຊາຊີບຄູ ພົບວ່າຜົນການປຽບທຽບຄະແນນສະເລ່ຍຄວາມຮູ້ຄວາມເຂົ້າໃຈກ່ຽວກັບການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງໄດ້ຮັບການອົບຮົມສູງກວ່າກ່ອນໄດ້ຮັບການອົບຮົມຢ່າງມີລະດັບຄວາມເຊື່ອໝັ້ນທາງສະຖິຕິ ສາມາດອະພິປາຍເພີ່ມເຕີມວ່າການ coaching ການການປະຕິບັດໃນການວິໄຈໃນຊັ້ນຮຽນໃຫ້ກັບນັກສຶກສາຝຶກຫັດວິຊາຊີບໄດ້ພັດທະນາທັກສະການວິໄຈໃນຊັ້ນຮຽນໂດຍການສະໜັບສະໜູນ ໃຫ້ຄວາມໝັ້ນໃຈ ແລະ ການຊ່ວຍເຫຼືອຂອງການໃຫ້ຄຳປຶກສາແນະນຳ ການວິໄຈໃນຊັ້ນຮຽນໃຫ້ກັບນັກສຶກສາຝຶກຫັດວິຊາຊີບ. ໃນການວິໄຈຄັ້ງນີ້ຜູ້ວິໄຈສ້າງແຜນການ ການໃຫ້ຄຳປຶກສາແນະນຳ ຂຶ້ນຕາມແນວຄິດການ coaching ຂອງແຮັສ (Haas, 2535) ແລະການທົບທວນນະວັດຕະກຳເປັນການພັດທະນາຄວາມຮູ້ ແລະ ທັກສະການການປະຕິບັດເປັນລາຍບຸກຄົນໂດຍຄຳນຶງເຖິງຄວາມພ້ອມໃນການຮຽນຮູ້ເປີດໂອກາດໃຫ້ນັກສຶກສາ, ຄູທີ່ປຶກສາ ແລະ ອາຈານທີ່ປຶກສາມີສ່ວນຮ່ວມໃນທຸກຂັ້ນຕອນ ເນັ້ນໃຫ້ມີການຝຶກການປະຕິບັດຢ່າງຕໍ່ເນື່ອງ ສະໝ່ຳສະເໝີ ຈົນສາມາດປະຕິບັດໄດ້ຢ່າງຖືກຕ້ອງໂດຍການ coaching ຕາມຂະບວນການ ປະກອບດ້ວຍການປະເມີນ ແລະ ວິເຄາະບັນຫາ, ການວາງແຜນການປະຕິບັດກິດຈະກຳຕາມຄວາມຮູ້ ແລະ ບັນຫາທີ່ພົບຈາກປະສົບການເດີມຂອງນັກສຶກສາ, ການປະຕິບັດກິດຈະກຳເພື່ອແກ້ໄຂບັນຫາຕາມແຜນທີ່ວາງໄວ້ໂດຍການ coaching ຈະສັງເກດ ແລະ ຕິດຕາມການປະຕິບັດກິດຈະກຳຢ່າງໃກ້ຊິດ ແລະການປະເມີນຜົນການປະຕິບັດກິດຈະກຳທີ່ຜ່ານມາຮ່ວມກັບຄູທີ່ປຶກສາ. ນັກສຶກສາມີຄວາມໝັ້ນໃຈໃນການນຳຄວາມຮູ້ ແລະ ທັກສະຕ່າງໆທີ່ໄດ້ຮັບຈາກການປະຕິບັດມາໃຊ້ໃນການວິໄຈໃນຊັ້ນຮຽນ ທັງແກ້ໄຂບັນຫາທີ່ເກີດຂຶ້ນໄດ້ ຈຶ່ງສົ່ງຜົນໃຫ້ມີຄະແນນການປະຕິບັດສູງຂຶ້ນ ດັ່ງທີ່ ແຮັສ (Haas, 2535) ກ່າວວ່າ ການ coaching ເປັນວິທີການພັດທະນາຄວາມຮູ້ ແລະ ທັກສະການປະຕິບັດ ເປັນການສົ່ງເສີມພຶດຕິກຳ ແລະ ຄວາມຮ່ວມມືຢ່າງຕໍ່ເນື່ອງໂດຍການໃຫ້ຄຳປຶກສາແນະນຳໄດ້ສະໜັບສະໜູນ, ຊ່ວຍເຫຼືອ ແລະ ຊີ້ແນະໃຫ້ບຸກຄົນມີການພັດທະນາທັກສະການປະຕິບັດ. ເມື່ອໄດ້ຮັບການຝຶກປະຕິບັດຢ່າງຕໍ່ເນື່ອງ ສະໝ່ຳສະເໝີ ຈະເຮັດໃຫ້ບຸກຄົນມີການພັດທະນາທັກສະການປະຕິບັດຈົນສາມາດປະຕິບັດກິດຈະກຳນັ້ນໆດ້ວຍຄວາມຊຳນານ. ຜູ້ວິໄຈຈຶ່ງໃຫ້ຂໍ້ມູນເພີ່ມເຕີມ, ຊີ້ແນະ ແລະ ໃຫ້ຄຳແນະນຳກ່ຽວກັບການສ້າງເຄື່ອງມືການວິໄຈ ເຊັ່ນ: ແບບທົດສອບ, ແບບສອບຖາມ, ແບບຝຶກ ຫຼື ສື່ທີ່ໃຊ້ໃນການຈັດການຮຽນການສອນ ຈົນນັກສຶກສາສາມາດວາງແຜນການປະຕິບັດກິດຈະກຳຂອງຕົນເອງໄດ້.

ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງການ coaching ໂດຍພາບລວມຢູ່ໃນລະດັບສູງ. ເມື່ອພິຈາລະນາຈຳແນກຄວາມສາມາດຕາມລາຍການຢູ່ໃນລະດັບສູງຈຳນວນ 13 ລາຍການ ຄື: ການລະບຸຕົວປ່ຽນທີ່ໃຊ້ໃນການວິໄຈໄດ້ຢ່າງຖືກຕ້ອງ, ການລະບຸສາເຫດຂອງບັນຫາການຮຽນ/ພຶດຕິກຳຂອງນັກຮຽນ, ການກຳນົດຈຸດປະສົງຂອງການວິໄຈໄດ້ຢ່າງຊັດເຈນເໝາະສົມ, ແລະ ການກຳນົດບັນຫາການວິໄຈໄດ້ຢ່າງ

ຊັດເຈນ ຕາມລຳດັບ. ເຊິ່ງສາມາດອະທິບາຍໄດ້ວ່າການໃຫ້ຄຳປຶກສາແນະນຳ ຕາມແຜນການ coaching ນັ້ນໄດ້ສະໜອງຂໍ້ມູນ, ສະໜັບສະໜູນ, ຊີ້ແນະ, ຝຶກທັກສະການປະຕິບັດ, ໃຫ້ຄວາມໝັ້ນໃຈ, ໃຫ້ຄວາມຊ່ວຍເຫຼືອໂດຍຄຳນຶງເຖິງຄວາມຮູ້ ແລະ ປະສົບການເດີມຂອງນັກສຶກສາ ແລ້ວປະຍຸກໃຊ້ໃຫ້ເໝາະສົມກັບນັກສຶກສາແຕ່ລະລາຍຄົນ ໃຫ້ສາມາດມີຄວາມເຂົ້າໃຈໄດ້ຢ່າງລະອຽດ, ມີການສື່ສານສອງທາງ, ມີການຖາມ ແລະ ສາມາດສະທ້ອນໃຫ້ນັກສຶກສາເກີດການປ່ຽນແປງການຮັບຮູ້, ອີກທັງໃຫ້ຊາບເຖິງບັນຫາໃນການວິໄຈໃນຊັ້ນຮຽນ, ສາມາດຊ່ວຍແກ້ບັນຫາທີ່ກ່ຽວຂ້ອງກັບກິດຈະກຳການສ້າງນະວັດຕະກຳເພື່ອແກ້ບັນຫາການຮຽນຮູ້ຂອງນັກຮຽນ ແລະ ໃຫ້ຄວາມຮູ້ແກ່ນັກສຶກສາໂດຍທີ່ນັກສຶກສາສາມາດນຳຄວາມຮູ້ທີ່ໄດ້ໄປເຊື່ອມໂຍງກັບປະສົບການເດີມ, ກະຕຸ້ນໃຫ້ນັກສຶກສາເກີດການປ່ຽນແປງການຮັບຮູ້ ແລະ ໄດ້ຝຶກການປະຕິບັດດ້ວຍຕົວເອງຢ່າງເປັນຂັ້ນຕອນ ແລະ ສາມາດຝຶກຈົນເກີດຄວາມຊຳນານ ໂດຍຜູ້ວິໄຈຄອຍໃຫ້ຂໍ້ມູນສະທ້ອນຄືນ ສະໜັບສະໜູນການປະຕິບັດເປັນການເສີມກຳລັງໃຫ້ຄວາມໝັ້ນໃຈ ມີສ່ວນຮ່ວມໃນການປະເມີນຕົນເອງໃນຜົນການປະຕິບັດທີ່ຜ່ານມາ ໃຫ້ເກີດການປັບປ່ຽນການປະຕິບັດທີ່ຖືກຕ້ອງຫຼາຍຂຶ້ນ ຈຶ່ງສົ່ງຜົນໃຫ້ຄະແນນການປະຕິບັດຂອງກຸ່ມທົດລອງຫຼັງສູງກວ່າ ກ່ອນການ coaching.

2. ຜົນການກວດຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບຫຼັງການ coaching ໂດຍພາບລວມມີຄຸນນະພາບຢູ່ໃນລະດັບປານກາງ. ທັງນີ້ອາດຈະເນື່ອງຈາກນັກສຶກສາຂາດປະສົບການໃນການວິໄຈ, ມີປະສົບການສະເພາະໃນການຮຽນລາຍວິຊາສ້າງຄູວິໄຈການສຶກສາເຊິ່ງອາດຈະຂາດການຝຶກການປະຕິບັດ (ຍົກເວັ້ນດ້ານເອກະສານ ແລະ ວິໄຈທີ່ກ່ຽວຂ້ອງຢູ່ໃນລະດັບໜ້ອຍ). ຜົນການວິໄຈສອດຄ່ອງກັບ ສິຣະດາ ທອງເຊື້ອ ແລະ ນະລິມົນ ສຣາທະພັນ (2557) ທີ່ສຶກສາບັນຫາການຝຶກຫັດວິຊາຊີບຂອງນັກສຶກສາຝຶກສອນພາກວິຊາຄະຫະກຳມະສາດມະຫາວິທະຍາໄລກະເສດສາດ ດ້ານການກຽມການສອນ, ສື່ການສອນ, ການດຳເນີນການສອນ, ຕົວນັກສຶກສາ, ຕົວນັກຮຽນ, ອາຈານທີ່ປຶກສາ, ຄູທີ່ປຶກສາ, ໂຮງຮຽນຝຶກຫັດວິຊາຊີບ ແລະ ການວິໄຈໃນຊັ້ນຮຽນຕາມການຮັບຮູ້ຂອງນັກສຶກສາຝຶກສອນ ພົບວ່າ ນັກສຶກສາມີບັນຫາດ້ານການດຳເນີນການສອນ ແລະ ການວິໄຈໃນຊັ້ນຮຽນຢູ່ໃນລະດັບປານກາງ ສ່ວນບັນຫາດ້ານອື່ນໆ ມີຢູ່ໃນລະດັບໜ້ອຍ.

## ສະຫຼຸບ

ຈາກການສຶກສາຄົ້ນຄວ້າ ຜົນຂອງການ coaching ຕໍ່ຄວາມຮູ້ ແລະ ຄວາມສາມາດໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ວິທະຍາໄລຄູສະຫວັນນະເຂດ ສາມາດສະຫຼຸບຜົນການວິໄຈດັ່ງນີ້:

1). ຄວາມຮູ້ໃນການວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ຫຼັງສູງກວ່າ ກ່ອນການ coaching ຢ່າງມີລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ .05 ຄວາມສາມາດໃນການວິໄຈໃນຊັ້ນຮຽນໂດຍພາບລວມຢູ່ໃນລະດັບສູງ ຜົນການວິເຄາະເນື້ອໃນສະຫຼຸບໄດ້ວ່າສູນຝຶກຫັດວິຊາຊີບຄວນຈັດຝຶກອົບຮົມການວິໄຈໃນຊັ້ນຮຽນເພີ່ມເຕີມເພື່ອກຽມຄວາມພ້ອມ ການວິໄຈໃນຊັ້ນຮຽນບໍ່ຄົບທຸກຂັ້ນຕອນເພາະຊ່ວງເວລາສັ້ນ ເຮັດໃຫ້ນັກສຶກສາ ຂາດການທົບທວນນະວັດຕະກຳທີ່ກ່ຽວຂ້ອງ ແລະ ຂາດການອ້າງອີງການ coaching ເປັນວິທີການທີ່ຊ່ວຍໃຫ້ນັກສຶກສາໄດ້ພັດທະນາທັກສະ, ຂະບວນການຄິດ, ຄວາມຮູ້ ແລະ ການປະຕິບັດໃຫ້ປະສົບຜົນສຳເລັດ ການໃຫ້ຄຳປຶກສາແນະນຳທີ່ດີຈະສ້າງຄວາມໜ້າເຊື່ອຖື ແລະ ໄວ້ວາງໃຈ.

2). ຜົນການກວດຄຸນນະພາບວິໄຈໃນຊັ້ນຮຽນຂອງນັກສຶກສາຝຶກຫັດວິຊາຊີບ ພາກວິຊາສ້າງຄູປະຖົມສຶກສາ ລະບົບ 12+2 ຫຼັງການ coaching ໂດຍພາບລວມຄຸນນະພາບຢູ່ໃນລະດັບປານກາງ ເນື່ອງມາຈາກຫຼັກສູດເນັ້ນໃສ່ການຮຽນໃນຫ້ອງຮຽນ ແຕ່ຂາດຂັ້ນຕອນການລົງມືເຮັດ ຈຶ່ງເກີດຄວາມເຂົ້າໃຈໃນການນຳເອົາທິດສະດີມາປະຍຸກ

ໃຊ້ໃນສະຖານະການຈິງໃນຊັ້ນຮຽນ ເຮັດໃຫ້ນັກສຶກສາຍັງຂາດອີງຄວາມຮູ້ພື້ນຖານ ແລະ ປະສົບການທາງກົງໃນການດຳເນີນການວິໄຈພາກປະຕິບັດ.

## ຂໍ້ຈຳກັດຂອງການຄົ້ນຄວ້າ (Limitations of the Study)

ການຄົ້ນຄວ້າຄັ້ງນີ້ໄດ້ດຳເນີນການຢ່າງເປັນລະບົບຕາມຂັ້ນຕອນທາງວິທະຍາສາດ, ແຕ່ກໍຍັງມີຂໍ້ຈຳກັດບາງປະການທີ່ຄວນຄຳນຶງເຖິງໃນການນຳໃຊ້ຜົນການສຶກສາ ແລະ ສຳລັບການຄົ້ນຄວ້າໃນຄັ້ງຕໍ່ໄປ ດັ່ງນີ້:

- **ຂໍ້ຈຳກັດດ້ານຂະໜາດຂອງກຸ່ມຕົວຢ່າງ (Small Sample Size):** ການວິໄຈຄັ້ງນີ້ໄດ້ເລືອກກຸ່ມຕົວຢ່າງແບບເຈາະຈົງໂດຍມີນັກສຶກສາເຂົ້າຮ່ວມພຽງ 3 ທ່ານ ຈາກປະຊາກອນທັງໝົດ 70 ທ່ານ. ເນື່ອງຈາກກຸ່ມຕົວຢ່າງມີຂະໜາດນ້ອຍຫຼາຍ, ຜົນການສຶກສາຈຶ່ງມີລັກສະນະເປັນກໍລະນີສຶກສາ (Case Study) ລົງເລິກສະເພາະກຸ່ມ. ດັ່ງນັ້ນ, ຜົນທີ່ໄດ້ຈຶ່ງອາດຈະບໍ່ສາມາດນຳໄປສະຫຼຸບອ້າງອີງ (Generalize) ເປັນຕົວແທນໃຫ້ແກ່ປະຊາກອນທັງໝົດ ຫຼື ນຳໄປປຽບທຽບກັບສະຖາບັນອື່ນໆໄດ້ຢ່າງໜັກແໜ້ນ.
- **ຂໍ້ຈຳກັດດ້ານການທົດສອບທາງສະຖິຕິ (Statistical Limitations):** ຈາກການທີ່ກຸ່ມຕົວຢ່າງມີພຽງ n=3, ການນຳໃຊ້ສະຖິຕິອ້າງອີງ (Inferential Statistics) ເຊັ່ນ: ການທົດສອບຄ່າ t-test (Dependent Sample) ອາດມີຂໍ້ຈຳກັດໃນເລື່ອງຂອງອຳນາດການທົດສອບທາງສະຖິຕິ (Statistical Power). ຄວາມແຕກຕ່າງຂອງຄະແນນທີ່ພົບອາດໄດ້ຮັບຜົນກະທົບຈາກຈຳນວນຕົວຢ່າງທີ່ໜ້ອຍ, ເຊິ່ງໃນທາງປະຕິບັດ ຖ້າກຸ່ມຕົວຢ່າງມີຂະໜາດໃຫຍ່ຂຶ້ນ ອາດຈະເຮັດໃຫ້ຄ່າຄວາມເຊື່ອໝັ້ນທາງສະຖິຕິມີຄວາມຊັດເຈນ ແລະ ໝັ້ນຄົງຫຼາຍກວ່າເກົ່າ.
- **ຂໍ້ຈຳກັດດ້ານໄລຍະເວລາໃນການດຳເນີນການ (Time Constraints):** ຂະບວນການລົງຝຶກຫັດວິຊາຊີບ ແລະ ການເຮັດການວິໄຈໃນຊັ້ນຮຽນມີໄລຍະເວລາຈຳກັດພຽງ 1 ພາກຮຽນ. ຊ່ວງເວລາທີ່ສັ້ນນີ້ເຮັດໃຫ້ນັກສຶກສາບໍ່ສາມາດດຳເນີນການວິໄຈໄດ້ຄົບຖ້ວນໃນທຸກຂັ້ນຕອນຢ່າງເລິກເຊິ່ງ, ໂດຍສະເພາະການຂາດການທົບທວນວັນນະກຳ (Literature Review) ທີ່ກ່ຽວຂ້ອງຢ່າງພຽງພໍ ແລະ ຂາດການອ້າງອີງທີ່ຖືກຕ້ອງເຊິ່ງສົ່ງຜົນກະທົບໂດຍກົງຕໍ່ຄຸນນະພາບຂອງລາຍງານການວິໄຈໃນພາກປະຕິບັດຕົວຈິງ

## ຂໍ້ສະເໜີແນະ

### ຂໍ້ສະເໜີແນະດ້ານການນຳເອົາຜົນຄົ້ນຄວ້າໄປນຳໃຊ້

1). ສູນຝຶກຫັດວິຊາຊີບ ຄວນຈັດປະຊຸມຊີ້ແຈງຈຸດປະສົງການຝຶກຫັດວິຊາຊີບຮ່ວມກັບໂຮງຮຽນສາມັນ ແລະ ຄູທີ່ປຶກສາ ເພື່ອໃຫ້ມີຄວາມເຂົ້າໃຈກົງກັນ. ພ້ອມກັນນັ້ນ, ຕ້ອງໄດ້ຊີ້ແຈງບົດບາດດ້ານການວິໄຈໃຫ້ຄູທີ່ປຶກສາຕື່ມອີກ ເພື່ອແກ້ໄຂບັນຫາການຂາດຄວາມເຂົ້າໃຈທີ່ເລິກເຊິ່ງ (ເຊັ່ນ: ການວິເຄາະບັນຫາ, ການສ້າງນະວັດຕະກຳ ແລະ ຂັ້ນຕອນການວິໄຈ).

2). ຈັດອົບຮົມການວິໄຈໃນຊັ້ນຮຽນ (ກ່ອນ ຫຼື ລະຫວ່າງຝຶກສອນ) ໂດຍໃຫ້ອາຈານປະຈຳຫຼັກສູດເປັນວິທະຍາກອນ ເພື່ອໃຫ້ແທດເໝາະກັບແຕ່ລະພາກວິຊາ. ຄຽງຄູ່ກັນນັ້ນ, ໃຫ້ນຳໃຊ້ລະບົບ Coaching ຢ່າງຕໍ່ເນື່ອງ ເພື່ອພັດທະນາຄວາມຮູ້ ແລະ ທັກສະໃຫ້ຄູທີ່ປຶກສາ ສາມາດໃຫ້ຄຳແນະນຳແກ່ນັກສຶກສາໄດ້ຢ່າງຖືກຕ້ອງ ແລະ ຍືນຍົງ.

3). ທາງວິທະຍາໄລຄູສະຫວັນນະເຂດ ຄວນສ້າງ "ຖານຂໍ້ມູນບົດວິໄຈໃນຊັ້ນຮຽນ" ເພື່ອໃຫ້ນັກສຶກສາລຸ້ນຕໍ່ໄປສາມາດສຶກສາເປັນຕົວຢ່າງໄດ້.

## 2. ຂໍ້ສະເໜີແນະສຳລັບການວິໄຈຄັ້ງຕໍ່ໄປ

1). ຄວນມີການສຶກສາບັນຫາການຝຶກຫັດວິຊາຊີບຂອງສາຂາອື່ນໆ ເພື່ອສະທ້ອນພາບລວມຂອງບັນຫາການຝຶກຫັດວິຊາຊີບ.

2). ຄວນສຶກສາປຽບທຽບພັດທະນາການຂອງການວິໄຈໃນຊັ້ນຮຽນຂອງການຝຶກຫັດວິຊາຊີບໃນດ້ານຕ່າງໆ ຂະນະເລີ່ມຝຶກ, ລະຫວ່າງຝຶກ ແລະ ສຳເລັດການຝຶກ ເພື່ອຫາສາເຫດທີ່ຈະແກ້ບັນຫາກ່ຽວກັບຊ່ວງເວລາໃນການວິໄຈໃນຊັ້ນຮຽນທີ່ມີພຽງ 1 ພາກຮຽນເຊິ່ງເຮັດໃຫ້ວິໄຈບໍ່ຄົບຂະບວນການ.

## ເອກະສານອ້າງອີງ

ຊາຕີ ຝ່າຍຄຳຕາ ແລະ ວັນນະທິພາ ຣອດແຮງຄ້າ. (2005). ບັນຫາການຝຶກຫັດວິຊາຊີບຂອງນັກສຶກສາໂຄງການສົ່ງເສີມການສ້າງຄູທີ່ມີຄວາມສາມາດພິເສດທາງວິທະຍາສາດ ແລະ ຄະນິດສາດ. ວາລະສານສົງຂານະຄະລິນ ສະບັບສັງຄົມສາດ ແລະ ມະນຸດສາດ.

ທິບວັນ ນຸ່ມປະເສີດ. (1999). ການສຶກສາການຈັດການຝຶກຫັດວິຊາຊີບໃນໂຮງຮຽນສັງກັດກົມສາມັນສຶກສາຈັງຫວັດສະເຊີງເຊົາ. (ວິທະຍານິພົນປະລິນຍາມະຫາບັນດິດ, ມະຫາວິທະຍາໄລຣາມຄຳແຫງ).

ຮຸ່ງຟ້າ ກິຕິຍານຸສັນ ແລະ ສົມປະສົງ ປະສົງເງິນໜ້າ. (1999). ການສຶກສາການຝຶກຫັດວິຊາຊີບຂອງນັກສຶກສາຄະນະສຶກສາສາດ ມະຫາວິທະຍາໄລບູລະພາ. ຊົນບຸລີ: ຄະນະສຶກສາສາດ ມະຫາວິທະຍາໄລບູລະພາ.

ວັນນະທິພາ ຣອດແຮງຄ້າ ແລະ ພາວິນີ ສີສຸກວັດທະນານັນ. (2002). ບັນຫາການຝຶກຫັດວິຊາຊີບຂອງນັກສຶກສາສາຂາການສອນວິທະຍາສາດ ຄະນະສຶກສາສາດ ມະຫາວິທະຍາໄລກະເສດສາດ.

ວິຊຽນ ເກດສິງ. (1995). ຄຳສະເລ່ຍກັບການແປຄວາມໝາຍ: ເລື່ອງງ່າຍໆ ທີ່ບາງຄັ້ງກໍພາດໄດ້. ຂ່າວສານວິໄຈການສຶກສາ.

ສິລະດາ ທອງເຊື້ອ ແລະ ນະລິມົນ ສຣາທະພັນ. (2014). ບັນຫາການຝຶກຫັດວິຊາຊີບຂອງນັກສຶກສາຝຶກສອນພາກວິຊາຄະທະກຳມະສາດສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລກະເສດສາດ. ວາລະສານວິຊາສ້າງຄູສຶກສາສາດປະລິທັດ.

ສາວິຕີ ໂລຈະນະສະມິດ ແລະ ວັນນະທິພາ ຣອດແຮງຄ້າ. (2005). ມິຕິໃໝ່ຂອງການຝຶກຫັດວິຊາຊີບ. ວາລະສານສຶກສາສາດປະລິທັດ.

ອຸບົນ ພວງມາລາ. (2009). ການພັດທະນາຂະບວນການວິໄຈໃນຊັ້ນຮຽນແບບມີສ່ວນຮ່ວມຂອງນັກສຶກສາຝຶກຫັດວິຊາຊີບລະດັບອະນຸປະລິນຍາວິທະຍາໄລຄູສະຫວັນນະເຂດ. ຊຽງໃໝ່.

Chaowatthanakun, K. (2015). The Development of a Mentoring Model for Enhancing Competency in Teaching and Conducting Classroom Action Research for Pre-Service Mathematics Teachers. (Doctoral dissertation, SilpakornUniversity). (in Thai)

Faikhamta, C & Roadrangka, V. (2005). Problem in Professional Experience Training of Student Teachers in the Project for the Promotion of Science and Mathematics Talented Teachers(PSMT). Songklanakarin Journal of Social Sciences and Humanities. 11(2) Apr-Jun,151-164 (in Thai)

Haas, S. A. (1992). coaching : Developing key players. Journal of Nursing Administration, 22(6), 54-58.